ພິມຄັ້ງທີ 1, 2018

ສະໜັບສະໜຸນໂດຍ: ສະຖານທູດຟຣັ່ງ

# ການຈະເລີນເຕີບໂຕ ຂອງເພດຊາຍ



ຄວາມຮູ້ກ່ຽວກັບ ການປ່ຽນແປງທາງດ້ານຮ່າງກາຍ
ອາລົມ ແລະ ຄວາມຮູ້ສຶກຂອງຜູ້ຊາຍ ແຕ່ນ້ອຍຈົນເຖິງໄວໜຸ່ມ

ສະມາຄົມສົ່ງເສີມສຸຂະພາບຄອບຄົວ (PFHA)

Suomen Suurlähetystö
Finlands Ambassad
Embassy of Finland
Reykjavik

PLAN INTERNATIONAL

# 10 ສິດທິທາງເພດທີ່ໄວໜຸ່ມຄວນຮູ້



1. ສິດທິຄວາມສະເໝີພາບ, ຄວາມເທົ່າທຽມກັນ ແລະ ບໍ່ຈຳແນກເພດ ຫຼື ບົດບາດ
2. ສິດທິໃນການມີສ່ວນຮ່ວມຂອງທຸກຄົນ ແລະ ທຸກເພດ
3. ສິດທິໃນການມີຊີວິດເສລີ, ມີຄວາມປອດໄພ ແລະ ມີສຸຂະພາບຮ່າງກາຍທີ່ດີ
4. ສິດທິໃນຄວາມເປັນສ່ວນຕົວ
5. ສິດທິໃນການປົກຄອງສ່ວນບຸກຄົນ ແລະ ການຮັບຮູ້ກົດໝາຍ
6. ສິດທິເສລີດ້ານຄວາມຄິດ, ການອອກຄວາມຄິດເຫັນ ແລະ ການສະແດງອອກສູ່ສັງຄົມ
7. ສິດທິຮັບຮູ້ດ້ານສຸຂະພາບ ແລະ ຄວາມກ້າວໜ້າໃນເລື່ອງວິທະຍາສາດ
8. ສິດທິການເຂົ້າເຖິງການສຶກສາ ແລະ ຮັບຮູ້ຂໍ້ມູນຂ່າວສານອັນໃໝ່ໆ
9. ສິດທິໃນການເລືອກທີ່ຈະແຕ່ງງານ ຫຼື ບໍ່ແຕ່ງ, ເລືອກຄູ່ເອງ ແລະ ການວາງແຜນຄອບຄົວເອງ ວ່າຈະເຮັດແນວໃດ ຫຼື ເມື່ອໃດທີ່ຕ້ອງການມີລູກ
10. ສິດທິໃນການຮັບຜິດຊອບ ແລະ ແກ້ໄຂສິ່ງທີ່ຕົນເປັນຜູ້ກະທຳ





# ການປ່ຽນແປງພາຍນອກຂອງຮ່າງກາຍ




ເດັກນ້ອຍຕັ້ງແຕ່ເກີດແມ່ນ ໄດ້ຮັບການເອົາໃຈໃສ່ດູແລເບິ່ງແຍງຈາກພໍ່ແມ່ຢ່າງໃກ້ຊິດຈິ່ງເຮັດໃຫ້ລາວມີສຸຂະພາບດີ ແລະ ໃຫຍ່ໄວ.

# ການເຕີບໃຫຍ່ຂະຫຍາຍຕົວຂອງເພດຊາຍ



ອາຍຸ 6 ເດືອນ



ອາຍຸ 4-5ປີ



ອາຍຸ 8-9 ປີ



ອາຍຸ 10-13 ປີ



ອາຍຸ 14-16 ປີ



ອາຍຸ 17-19 ປີ





ໄວໜຸ່ມມີເພດສຳພັນແບບມີການປ້ອງກັນ.






ສະນັ້ນທາງທີ່ດີໄວໜຸ່ມ ຄວນຮູ້ຈຳແນກສິ່ງທີ່ດີ ແລະ ບໍ່ດີ, ຕ້ອງມີແນວຄິດກວ້າງໄກ, ຄວນສຶກສາຮຽນຮູ້ຂໍ້ມູນສຸຂະພາບຈະເລີນພັນ, ເພື່ອດູແລ ແລະ ປ້ອງກັນສຸຂະພາບຂອງຕົນເອງ, ເພາະອານາຄົດຂອງຕົນເອງເປັນສິ່ງສຳຄັນທີ່ສຸດໃນຊີວິດ.



ໄວໜຸ່ມມີເພດສຳພັນ
ແບບບໍ່ມີການປ້ອງກັນ



ການຖືພາ
ແບບບໍ່ຕ້ອງການ

ການຕິດເຊື້ອພະຍາດຕິດຕໍ່ທາງເພດສຳພັນ STDs





ພະຍາດພູມຕ້ານ
ທານເຊື່ອມ (HIV)



ໂລກເອດ (AIDS)

ຖ້າມີເພດສຳພັນກັບເພດກົງກັນຂ້າມແບບບໍ່ມີການປ້ອງກັນຈະເຮັດໃຫ້ແມ່ຍິງຖືພາ ແລະ ສ່ຽງຕໍ່ການຕິດເຊື້ອພະຍາດທາງເພດສຳພັນ














ເມື່ອອາຍຸໄດ້ 6-9 ປີແມ່ນໄລຍະທີ່ກິນຫຼາຍ ແລະ ນອນຫຼັບດີ.

## ໄວລຸ້ນຕອນຕົ້ນ ອາຍຸ 11–14 ປີ

- ສົນໃຈສໍ້ຖາມເລື່ອງຮ່າງກາຍນຳໝູ່ຄູ່ ຫຼື ຄົນໃນຄອບຄົວ
- ບາງຄັ້ງຢາກມີເວລາສ່ວນຕົວ
- ມີອາລົມອ່ອນໄຫວທາງເພດ, ເພີ້ຝັນ
- ຮູ້ສຶກມັກເພດກົງກັນຂ້າມ
- ຮ່າງກາຍເລີ່ມມີການປ່ຽນແປງ











ໄວໜຸ່ມຜູ້ຊາຍໄລຍະນີ້ຮູ້ສຶກອ່ອນໄຫວ ແລະ ຄິດຢາກທົດລອງ ລືມຄິດເຖິງຜົນຮ້າຍທີ່ຈະຕາມມາ.










ເວລາເປັນໜຸ່ມເຕັມຕົວແມ່ນມີຄວາມສົນໃຈເພດກົງກັນຂ້າມ ແລະ ມັກສະແດງອອກຢ່າງຊັດເຈນມີຄວາມຮູ້ສຶກຕ້ອງການທາງເພດຕາມທຳມະຊາດ.









ໃນຂະນະດຽວກັນນັ້ນ ຈະເລີ່ມສະແດງອອກວ່າມີຄວາມຕ້ອງການຄວາມເປັນອິດສະລະ, ຢາກຮັບຜິດຊອບຕົວເອງ ແລະ ສະແດງລັກສະນະຄວາມເປັນຜູ້ໃຫ່ຍຂຶ້ນ, ເຊື່ອໝູ່ຫຼາຍກວ່າພໍ່ແມ່, ຖ້າຄົບໝູ່ບໍ່ດີ ກໍຈະເຮັດໃຫ້ຕົວເອງກ້າວເຂົ້າສູ່ຄວາມສ່ຽງຫຼາຍໆດ້ານ.

## ໄວລຸ້ນຕອນປາຍ ອາຍຸ 15-19 ປີ

- ບໍ່ຢາກໄປຮ່ວມກິດຈະກຳນຳພໍ່ແມ່
- ຢາກໄປເຮັດກິດຈະກຳກັບກຸ່ມຂອງຕົນເອງ ( ໝູ່ຄູ່ )
- ຢາກເຂົ້າສັງຄົມແບບຜູ້ໃຫຍ່ (ງານລ້ຽງ, ງານວັນເກີດ, ງານດອງ, ...)
- ການສະແດງອອກທາງເພດຊັດເຈນຂື້ນ.




- ບໍ່ມັກໃຫ້ໃຜມາຈູ່ຈີ້ຈຸກຈິກ
- ກ້າອອກຄຳຄິດເຫັນ ( ກ້າເວົ້າ )
- ກ້າສະແດງອອກ
- ຢາກໂດດເດັ່ນເປັນທີ່ຕ້ອງຕາຕ້ອງໃຈຄົນອື່ນ
- ມີຄວາມໃຝ່ຝັນດ້ານໃດດ້ານໜຶ່ງ ຫຼື ຫຼາຍໆດ້ານ



## ການປ່ຽນແປງດ້ານອາລົມ ແລະ ຄວາມຄິດຂອງໄວໜຸ່ມຊາຍ







ເດັກຊາຍໃນໄວນີ້ ມີຄວາມປ່ຽນແປງດ້ານອາລົມ, ຄວາມຄິດ, ຄວາມຄຶກຄະນອງ, ຄວາມຮຸນແຮງ, ຫງຸດຫງິດງ່າຍ





ຮຽນຮູ້ການສຳເລັດຄວາມຕ້ອງການທາງເພດດ້ວຍຕົວເອງ(ຊັກວ່າວ). ຖ້າມີເພດສຳພັນກັບເພດຍິງ ແບບບໍ່ມີການປ້ອງກັນກໍ່ຈະເຮັດໃຫ້ແມ່ຍິງຖືພາໄດ້.






ໂຄງກະດູກຈະແຂງແຮງ, ນ້ຳໜັກ ແລະ ລວງສູງເພີ່ມຂຶ້ນ, ບ່າໄຫຼ່ກວ້າງອອກ. ແຂນຂາໜ້າເອິກຈະມີເສັ້ນເອັນ, ກ້າມຊີ້ນຈະເປັນກ້ອນໆ. ມີຂົນດົກໜາ ແລະ ຍາວໄວ, ອະໄວຍະວະເພດໃຫຍ່ຂຶ້ນ ແລະ ມີຂົນ, ຢູ່ຂີ້ແຮ້ມີກິ່ນເຫື່ອ, ມີໜວດຢູ່ຮີມສົບ ແລະຄາງ

# ການປ່ຽນແປງດ້ານຮ່າງກາຍ ພາຍນອກ ຂອງເພດຊາຍທົ່ວໄປ









ອະໄວຍະວະເພດຊາຍຈະມີຂະໜາດໃຫ່ຍຂຶ້ນ ແລະ ມີຄວາມຮູ້ສຶກທາງເພດ, ເມື່ອຝັນວ່າໄດ້ຮ່ວມເພດກັບເພດຍິງ ຈະມີນ້ຳອະສຸຈິໄຫຼອອກມາຈາກປາຍອະໄວຍະວະ (ຝັນປຽກ)



ຫຼັງຈາກທີ່ຕົວອະສຸຈິເຕີບໃຫຍ່ສົມບູນແລ້ວ ຈະມາລໍຖ້າສົ່ງອອກໃນເວລາທີ່ມີການຮ່ວມເພດໃນການຮ່ວມເພດແຕ່ລະຄັ້ງຜູ້ຊາຍປ່ອຍຕົວອະສຸຈິປະມານ 100-600 ລ້ານຕົວ ແຕ່ມີຕົວດຽວທີ່ໄປປະສົມກັບໄຂ່ຂອງແມ່ຍິງ ແລະ ສາມາດມີລູກໄດ້.



## ຄວາມແຕກຕ່າງທາງດ້ານຮ່າງກາຍຂອງເພດຍິງ ແລະ ເພດຊາຍໃນໄລຍະໄວໜຸ່ມ



ລະບົບການຜະລິດນ້ຳອະສຸຈິ




ຖົງອັນທະມີໜ້າທີ່ປົກປ້ອງລູກອັນທະ ແລະ ຮັກສາອຸນຫະພູມໃຫ້ສະໝ່ຳສະເໝີ ເພື່ອຜະລິດຕົວອະສຸຈິ.







ອະສຸຈິຜິດປົກກະຕິ


ອະສຸຈິປົກກະຕິ

ໃນລູກອັນທະຈະມີທໍ່ນ້ອຍໆຂົດຢູ່ໃນນັ້ນເປັນແສນໆ ເຊິ່ງເປັນບ່ອນຜະລິດຕົວອະສຸຈິ